SCG

# ຫຼັງຄາຄອນກຣີດ ເອັດສຊີຈີ ລຸ້ນ
# CPAC Smooth Cool (ຊີແພັກ ສມູດຄູລ)



# ຫຼັງຄາຄອນກຣີດ ເອັດສຊີຈີ ລຸ້ນ CPAC Smooth COOL

ເຮືອນທີ່ທັນສະໄໝຕ້ອງຄູ່ຄວນກັບຫຼັງຄາທີ່ທັນສະໄໝເທົ່ານັ້ນ. ເລືອກຫຼັງຄາລຸກຄູລໃຫ້ເຮືອນເບິ່ງທັນສະໄໝ
ເລືອກຫຼັງຄາຄອນກຣີດ ເອັດສຊີຈີ ລຸ້ນ ຊີແພັກ ສມູດຄູລ ທີ່ຄູລຂຶ້ນອີກລະດັບໜຶ່ງດ້ວຍເອກະລັກບໍ່ຊ້ຳໃຜ

## *ຜິວສຳພັດລຽບນຽນ*

ພັດທະນາເຕັກໂນໂລຊີການຜະລິດໄປອີກລະດັບໜຶ່ງໃຫ້ຜິວກະເບື້ອງລຽບສວຍງາມ
ເພີ່ມລຸກທັນສະໄໝຫຼາຍຂຶ້ນໃຫ້ເຮືອນ



ລຸ້ນໃໝ່ ລຸ້ນເກົ່າ

## *ຮູບລອນນ້ອຍ ລອນເຊັ້ນຈູລຽນ*

ລອນເອກະລັກສະເພາະຂອງເອັດສຊີຈີ ໃຫ້ຜືນຫຼັງຄາສວຍງາມໂດດເດັ່ນ
ດ້ວຍຮູບລອນລະອຽດບໍ່ຄືໃຜພ້ອມທ້ອງລອນກວ້າງຊ່ວຍລະບາຍນ້ຳໄດ້ດີ



ຫຼັງຄາຄອນກຣີດ ເອັດສຊີຈີ ລຸ້ນ CPAC
**SMOOTH**
**COOL**

PREMIUM
ລອນເຊັ້ນຈູລຽນ
ຍົກລະດັບຄວາມງາມອີກຂັ້ນ
ດ້ວຍຮູບລອນເອກະລັກສະເພາະ
ຂອງເອັດສຊີຈີ

DOUBLE COATING TECHNOLOGY

### ສີທົນທານດີກວ່າ

ດ້ວຍເຕັກໂນໂລຊີ Double Coating
ເຄືອບສີ 2 ຊັ້ນ ສີຕິດທົນນານຍິ່ງຂຶ້ນ

ສະທ້ອນລັງສີ ຄວາມຮ້ອນ 2 ເທົ່າ

### ນະວັດຕະກຳສະທ້ອນຄວາມຮ້ອນ

ຜະລິດໂດຍໂມເລກຸນເມັດສີພິເສດ
ຊ່ວຍສະທ້ອນລັງສີຄວາມຮ້ອນໄດ້ດີກວ່າສູດເກົ່າເຖິງ 2 ເທົ່າ*

*ສະທ້ອນລັງສີຄວາມຮ້ອນໄດ້ດີກວ່າສູດເກົ່າ 2 ເທົ່າ ພິຈາລະນາຈາກຄ່າການສະທ້ອນພະລັງງານລັງສີແສງຕາເວັນຊ່ວງ NIR ຫຼື Near Infrared Reflectance ຂອງຜະລິດຕະພັນຫຼັງຄາຄອນກຣີດ ເອັດສຊີຈີ ລຸ້ນ ຊີແພັກ ສມູດຄູລ ສີຊາໂດ ເກຣ ປຽບທຽບກັບຜະລິດຕະພັນຫຼັງຄາຄອນກຣີດ ເອັດສຊີຈີ ລຸ້ນ ຊີແພັກ ສິລິກໂນ ເກຣ ເຊິ່ງດຳເນີນການທົດສອບແລະຮັບຮອງຄ່າໂດຍມະຫາວິທະຍາໄລເຕັກໂນໂລຊີພະຈອມເກົ້າທົນບຸລີ

# ສີເຂັ້ມ
# ຄູລຂຶ້ນອີກລະດັບໜຶ່ງ

ຍິ່ງເຂັ້ມຍິ່ງເຮັດໃຫ້ເຮືອນມີຄວາມສວຍງາມທີ່ໂດດເດັ່ນ ທັນສະໄໝ ລຸກຄູລ ທີ່ຖືກໃຈ ຕ້ອງ ຊີແພັກ ສມູດຄູລ ທຸກສີ ຈຶ່ງເປັນຫຼັງຄາສີໂທນເຂັ້ມສຳລັບເຮືອນທັນສະໄໝໂດຍສະເພາະ

## SPECIAL COLLECTION



CLASSIC BLUE
ຄລາສສິກ ບລູ



AQUA BLUE
ອາຄວາ ບລູ



COOL GREY
ຄູລ ເກຣ



SHADOW GREY
ຊາໂດ ເກຣ



GRANITE BROWN
ແກຣນິດ ບຣາວ



RED BRICK
ເຣດ ບຣິກ



ROCCO BROWN
ຣັອກໂຄ່ ບຣາວ

## ຂໍ້ມູນສິນຄ້າ

| | | |
|---|---|---|
| ຂະໜາດກະເບື້ອງຕໍ່ແຜ່ນ | 33 x 42 | ຊມ. |
| ນ້ຳໜັກກະເບື້ອງຕໍ່ແຜ່ນ | 4.05 | ກກ. |
| ຄວາມຊັນຂອງຫຼັງຄາທີ່ແນະນຳ | 30 – 35 | ອົງສາ |
| ຈຳນວນການໃຊ້ງານ | 10 – 11 | ແຜ່ນ/ຕາແມັດ (ຂຶ້ນຢູ່ກັບຮູບຊົງຫຼັງຄາ) |
| ໄລຍະຂ້າວ | 32 – 34 | ຊມ. |

ເຮືອນຈະເຢັນກວ່າ ດ້ວຍລະບົບປ້ອງກັນຫຼັງຄາຮ້ອນ ເອັດສຊີຈີ ປ້ອງກັນບ້ານຮ້ອນ ດ້ວຍການສະທ້ອນລັງສີຄວາມຮ້ອນ ຕັ້ງແຕ່ທີ່ຫຼັງຄາໄດ້ສູງເຖິງ 95%



**ໃໝ່ລ້າສຸດ!!**

ແຜ່ນສະທ້ອນຄວາມຮ້ອນ ເອັດສຊີຈີ
ລຸ້ນ ອັນຕຣ້າຄູລ ອິນໂນກຣີນ




ແຜ່ນສະທ້ອນຄວາມຮ້ອນ ເອັດສຊີຈີ

ໃໝ່ !

ຫຼັງຄາຄອນກຣີດ ເອັດສຊີຈີ ລຸ້ນ CPAC

SMOOTHCOOL

# ຂໍ້ຄວນປະຕິບັດ ເພື່ອຄວາມປອດໄພໃນການໃຊ້ງານ






1. ກະລຸນາສຶກສາຄູ່ມືການຕິດຕັ້ງ ແລະປະຕິບັດຕາມຢ່າງເຄັ່ງຄັດ ກ່ອນເລີ່ມວຽກຕິດຕັ້ງ
2. ພື້ນຜິວຜະລິດຕະພັນຫຼັງຄາຄອນກຣີດມີຄວາມໝື່ນ ຫ້າມ!ຂຶ້ນຍ່າງເທິງຫຼັງຄາໃນຂະນະທີ່ຜິວກະເບື້ອງປຽກຫຼືມີຄວາມຊຸ່ມ ເພາະເປັນອັນຕະລາຍເຮັດໃຫ້ໝື່ນຕົກຈາກຫຼັງຄາໄດ້
3. ຫຼັງຄາມີຄວາມລາດຊັນ ການຂຶ້ນຍ່າງເທິງຫຼັງຄາອາດໝື່ນລົ້ມ ຕົກໄດ້ ຫ້າມ!ຂຶ້ນເທິງຫຼັງຄາໂດຍບໍ່ຈຳເປັນ ໃນກໍລະນີທີ່ຈຳເປັນ ຕ້ອງດຳເນີນການໂດຍຊ່າງທີ່ມີຄວາມຊຳນານເທົ່ານັ້ນ
4. ຂະນະຕິດຕັ້ງຜະລິດຕະພັນຫຼັງຄາຄອນກຣີດ ຕ້ອງສວມໃສ່ອຸປະກອນປ້ອງກັນໄພສ່ວນບຸກຄົນທຸກຄັ້ງເຊັ່ນ: ເຂັມຂັດນິລະໄພ (safety Belt) ແລະສາຍຍຶດໂຍງ (Life Line) ເປັນຕົ້ນ ແລະຄວນປະຕິບັດງານຢ່າງລະມັດລະວັງ
5. ການຕັດຜະລິດຕະພັນຫຼັງຄາຄອນກຣີດຄວນສວມໃສ່ອຸປະກອນປ້ອງກັນສ່ວນບຸກຄົນ ໄດ້ແກ່ ຜ້າປິດດັງ ຖົງມື ທີ່ອັດຫູ ແລະແວ່ນຕານິລະໄພທຸກຄັ້ງ ແລະຫຼັງຈາກຕັດແລ້ວ ຫາກມີຄາບຝຸ່ນປົວຕິດເທິງຜິວກະເບື້ອງ ໃຫ້ໃຊ້ຜ້າສະອາດເຊັດເຮັດຄວາມສະອາດທັນທີ ເພື່ອປ້ອງກັນຝຸ່ນປູນຕິດແໜ້ນເທິງຜິວກະເບື້ອງ
6. ຫ້າມຮັບປະທານ ຫຼື້ນຳເຂົ້າປາກ ແລະບໍ່ຄວນສູດດົມຝຸ່ນທີ່ເກີດຈາກການຕັດ ເຈຍ ເຈາະ ຫຼືຂັດ ຜະລິດຕະພັນຫຼັງຄາຄອນກຣີດ
7. ຜະລິດຕະພັນຫຼັງຄາຄອນກຣີດໄດ້ຮັບການອອກແບບເພື່ອໃຊ້ສຳຫຼັບການມຸງຫຼັງຄາລາດອຽງຫຼື Pitched Roof (ຫຼັງຄາລາດອຽງ ໝາຍຖືງ ຫຼັງຄາທີ່ຕ້ອງມີມຸມຍົກຄົງທີ່ ບໍ່ເປັນສ່ວນໂຄ້ງ ເຊັ່ນ ຫຼັງຄາຊົງຈົ່ວ ຫຼັງຄາຊົງປັ້ນຫຍາ ຫຼື ຫຼັງຄາຊົງປະສົມລະຫວ່າງ ຊົງຈົ່ວກັບປັ້ນຫຍາ ເປັນຕົ້ນ) ທີ່ມີມຸມຍົກຕາມຂໍ້ກຳໜົດຂອງກະເບື້ອງແຕ່ລະຊະນິດ ຕາມ “ຄູ່ມືການຕິດຕັ້ງ”ເທົ່ານັ້ນ
8. ເມື່ອມີການຂົນສົ່ງ ຂົນຍ້າຍ ແລະກອງເກັບຜະລິດຕະພັນຜະລິດຕະພັນຫຼັງຄາຄອນກຣີດໂປດປະຕິບັດຕາມຄູ່ມືມາດຕະຖານການຈັດບັນທຸກ ຂົນສົ່ງ ຂົນຖ່າຍ ແລະກອງເກັບສິນຄ້າທີ່ທາງບໍລິສັດ ກຳໜົດຢ່າງເຄັ່ງຄັດເພື່ອປ້ອງກັນອັນຕະລາຍແລະຄວາມເສຍຫາຍທີ່ອາດເກີດຂຶ້ນລະຫວ່າງປະຕິບັດວຽກ
9. ຫ້າມ! ດັດແປງໃດໆໃນຜະລິດຕະພັນຫຼັງຄາຄອນກຣີດ ເຊັ່ນ: ການສີດສະໜວນຄວາມຮ້ອນປະເພດໂຟມດ້ານລຸ່ມ ຫຼືການທາສີ ເປັນຕົ້ນ ເຊິ່ງອາດຈະສົ່ງຜົນກະທົບຕໍ່ປະສິດທິພາບການໃຊ້ງານໃນພາຍຫຼັງ

- ແຄັດຕາລ໊ອກຜະລິດຕະພັນຫຼັງຄາຄອນກຣີດ ເອັດສຊີຈີ ລຸ້ນ ຊີແພັກ ສມູດຄູລ ສະບັບນີ້ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ ວັນທີ 1 ກໍລະກົດ 2022 ໂດຍໃຫ້ຍົກເລີກແຄັດຕາລ໊ອກສະບັບທີ່ພິມກ່ອນໜ້ານີ້ທັງໝົດ
- ຜະລິດຕະພັນຫຼັງຄາຄອນກຣີດ ເອັດສຊີຈີ ລຸ້ນ ຊີແພັກ ສມູດຄູລ ຖືກອອກແບບແລະກຳໜົດວິທີການໃຊ້ງານໃຫ້ເໝາະສົມກັບສະພາບການໃຊ້ງານໃນປະເທດໄທເທົ່ານັ້ນ ການນຳໄປໃຊ້ງານນອກປະເທດໄທ ຖືເປັນຄວາມຮັບຜິດຊອບໂດຍກົງຂອງຜູ້ອອກແບບ ຜູ້ຄວບຄຸມວຽກກໍ່ສ້າງແລະຜູ້ຕິດຕັ້ງ ແຄັດຕາລ໊ອກແລະຄູ່ມືຕິດຕັ້ງຂອງບໍລິສັດໄດ້ຮັບການປັບປຸງຢູ່ສະເໝີ ຜູ້ຊື້/ຜູ້ໃຊ້ ຜູ້ອອກແບບ ຜູ້ຄວບຄຸມວຽກກໍ່ສ້າງ ແລະຜູ້ຕິດຕັ້ງຕ້ອງກວດສອບວ່າທີ່ໃຊ້ເປັນສະບັບທີ່ບັງຄັບໃຊ້ຢູ່ໃນປະຈຸບັນ ຫາກບໍ່ໝັ້ນໃຈຫຼືມີຂໍ້ສົງໄສກວດສອບໄດ້ທີ່ www.scgbuildingmaterials.com
- ສີຂອງຜະລິດຕະພັນໃນຮູບໃຊ້ເພື່ອການໂຄສະນາ ເຊິ່ງອາດແຕກຕ່າງຈາກສີຈິງຂອງຜະລິດຕະພັນເນື່ອງຈາກລະບົບການພິມ ຄວນພິຈາລະນາສີຈິງທີ່ຮ້ານຄ້າກ່ອນການສັ່ງຊື້
- ສະພາບຂອງຜະລິດຕະພັນທີ່ມີການປ່ຽນແປງຂຶ້ນຢູ່ກັບອາຍຸການໃຊ້ງານ ສະພາບອາກາດ ແລະສະພາບສິ່ງແວດລ້ອມ
- ຄວນຊື້ຜະລິດຕະພັນຫຼັງຄາຄອນກຣີດໃຫ້ຄົບຖ້ວນພຽງພໍຕໍ່ການໃຊ້ງານໃນການສັ່ງຊື້ຄັ້ງດຽວກັນ ເພື່ອໃຫ້ໄດ້ກະເບື້ອງທີ່ຜະລິດໃນຮອບດຽວກັນ
- ສະທ້ອນລັງສີຄວາມຮ້ອນໄດ້ດີກວ່າສູດເກົ່າ 2 ເທົ່າ ພິຈາລະນາຈາກຄ່າການສະທ້ອນພະລັງງານລັງສີແສງຕາເວັນ ຊ່ວງ NIR ຫຼື Near Infrared Reflectance ຂອງຜະລິດຕະພັນ ຫຼັງຄາຄອນກຣີດ ເອັດສຊີຈີ ລຸ້ນ ຊີແພັກ ສມູດຄູລ ສີຊາໂດ ເກຣ ປຽບທຽບກັບຜະລິດຕະພັນຫຼັງຄາຄອນກຣີດ ເອັດສຊີຈີ ລຸ້ນ ຊີແພັກ ສີລິກໂນ ເກຣ ເຊິ່ງດຳເນີນການທົດສອບແລະຮັບຮອງຄ່າໂດຍມະຫາວິທະຍາໄລເຕັກໂນໂລຊີພະຈອມເກົ້າທົນບຸລີ

R-SMKMC11021R01 *ສີຂອງຜະລິດຕະພັນໃນຮູບພາບອາດແຕກຕ່າງຈາກສີຂອງຜະລິດຕະພັນຕົວຈິງ ເນື່ອງຈາກລະບົບການພິມ ຄວນພິຈາລະນາສີຂອງຜະລິດຕະພັນຕົວຈິງທີ່ຮ້ານຄ້າກ່ອນການສັ່ງຊື້.

All content, design, and layout are Copyright © 2022, SCG Cement-Building Materials All Rights Reserved, Reproduction in whole or part in any form or medium without specific written permission is prohibited.

ສະແກນເບິ່ງລາຍລະອຽດເພີ່ມເຕີມ

SCG | SCG Authorized Dealer

ຫາຊື້ໄດ້ທີ່ຮ້ານຂາຍເຄື່ອງກໍ່ສ້າງທົ່ວປະເທດ

SCG International Laos Co., Ltd. Tel. +856 21 454 596-7,

Website : www.scgbuildingmaterials.com , https://www.facebook.com/scgbrandlaos